ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0451 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2012

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າໄມ້

- ອີງຕາມ ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມ ດຳລັດວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009.

**ລັດຖະມົນຕີ ວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າໄມ້ ມາ ສປປ ລາວ ແລະ ເພື່ອເກັບກຳຂໍ້ມູນສະຖິຕິໃນການນຳເຂົ້າ ໂດຍຜ່ານລະບອບການອອກໃບອະນຸຍາດແບບອັດຕະໂນມັດ, ແຕ່ບໍ່ໄດ້ນຳໃຊ້ໃນການຈຳກັດປະລິມານ ຫຼື ມູນຄ່າໃນການນຳເຂົ້າ.

### ມາດຕາ 2 ອະທິບາຍສັບ

ໃນຂໍ້ຕົກລົງສະບັບນີ້ "ໄມ້" ໝາຍເຖິງ ໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ແປຮູບ ແລະ ໄມ້ເຄິ່ງສຳເລັດຮູບ ຊຶ່ງໄດ້ລະບຸໄວ້ໃນໝວດລະຫັດເຄົ້າ 4403, 4407.10 – 4407.28, 0601 ຂອງສາລະບານອັດຕາພາສີຂອງ ສປປ ລາວ.

### ມາດຕາ 3 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ການນຳເຂົ້າໄມ້ ຢູ່ ສປປ ລາວ.

## ໝວດທີ 2
## ລະບຽບການຂໍອະນຸຍາດນຳເຂົ້າໄມ້

### ມາດຕາ 4 ສິດ ແລະ ເງື່ອນໄຂໃນການນຳເຂົ້າໄມ້

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ມີສິດນຳເຂົ້າໄມ້ ໂດຍຕ້ອງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

### ມາດຕາ 5 ການຂໍອະນຸຍາດນຳເຂົ້າໄມ້

ການນຳເຂົ້າໄມ້ ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າຈາກ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

### ມາດຕາ 6 ເອກະສານປະກອບຂໍອະນຸຍາດນຳເຂົ້າໄມ້

ເອກະສານທີ່ຕ້ອງປະກອບ ເພື່ອຂໍອະນຸຍາດນຳເຂົ້າໄມ້ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ;
2. ສຳເນົາຂອງເອກະສານຕາມແຕ່ລະກໍລະນີ:
   - ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດ ທີ່ ຢູ່ ສປປ ລາວ);
   - ໃບທະບຽນວິສາຫະກິດອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ);
3. ໃບອະນຸຍາດສົ່ງອອກໄມ້ຈາກປະເທດຕົ້ນທາງ (ຖ້າມີ);
4. ບັນຊີໄມ້ (Log List).

ໃນກໍລະນີ ເອກະສານເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຈາກ ສຳນັກງານທະບຽນສານຂອງ ສປປ ລາວ.

### ມາດຕາ 7 ໃບອະນຸຍາດນຳເຂົ້າໄມ້

ການອອກ, ການປ່ຽນແປງ ແລະ ອາຍຸ ຂອງໃບອະນຸຍາດນຳເຂົ້າໄມ້ ໃຫ້ປະຕິບັດຕາມດຳລັດ 180/ນຍ, ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ. ໃບອະນຸຍາດນຳເຂົ້າໄມ້ບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

### ມາດຕາ 8 ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກ ແລະ ການປ່ຽນແປງ ຂອງໃບອະນຸຍາດນຳເຂົ້າໄມ້ ແມ່ນໃຫ້ອີງຕາມລັດຖະບັນຍັດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

ມາດຕາ 9 ການສະໜອງເອກະສານໃນເວລານຳເຂົ້າໄມ້ເພື່ອປຸງແຕ່ງຕົວຈິງ

ໃນເວລານຳເຂົ້າໄມ້ຕົວຈິງ, ຜູ້ນຳເຂົ້າຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ແກ່ ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການທາງພາສີ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

ມາດຕາ 10 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

ມາດຕາ 11 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 30 ວັນນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ,

ດຣ. ນາມ ວິຍະເກດ